ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 2605 /ທຄຕລ 2022

ນະຄອນຫຼວງວຽງຈັນ, ວັນທີ: 06 OCT 2022

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ໂຮງພິມພາກລັດ ແລະ ເອກະຊົນ ຢູ່ພາຍໃນ ສປປ ລາວ.

**ເລື່ອງ :** ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປະຕິທິນ ປະຈຳປີ 2023.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ໂຮງພິມພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາປະຕິທິນ ທຄຕລ ປະຈຳປີ 2023 ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຄຸນລັກສະນະ |
|---|---|---|
| 1 | **ປະຕິທິນ ແຂວນຝາ:**<br>**ຈຳນວນ 50.000 ອັນ** | - ຂະໜາດ: 40*60 ຊມ (2 ເດືອນ/ໜ້າ).<br>- ນໍ້າໜັກເຈ້ຍ 160 ແກຼມ.<br>- ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ເຫຼັກໜີບສີທອງ ເທິງຫົວປະຕິທິນແຂວນຝາ.<br>- ການຫຸ້ມຫໍ່ປະຕິທິນ: ຖົງຢາງໃສ, 50 ອັນ/ແກັດ |
| 2 | **ປະຕິທິນຕັ້ງໂຕະ:**<br>**ຈຳນວນ 25.000 ອັນ** | - ຂະໜາດ: 15*21*9 cm (2 ເດືອນ/ໜ້າ)<br>- ນໍ້າໜັກເຈ້ຍ 160 ແກຼມ.<br>- ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ປ່ວງດູກງູເຫຼັກເບົາເຕັມຫົວ (ສີຂາວ).<br>- ການຫຸ້ມຫໍ່ປະຕິທິນ: ຊອງເຈ້ຍສີຂາວ.<br>- 100 ອັນ/ແກັດ. |

- ❖ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**
- ❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດໂຮງພິມ (ຜະລິດພາຍໃນປະເທດ) ແລະ ດຳເນີນທຸລະກິດຢ່າງໜ້ອຍ 2 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2021 ແລະ ເອກະສານກ່ຽວກັບຜົນງານການຜະລິດປະຕິທິນ ຜ່ານມາ.
2. ຕົວຢ່າງປະຕິທິນຢ່າງລະ 1 ແຜ່ນ, ພ້ອມທັງກຳນົດລາຍລະອຽດຕາມສະເປັກຂ້າງເທິງ (ຕາມ Format ຄັດຕິດມາພ້ອມນີ້)
3. ຕ້ອງມີຄວາມສາມາດຈັດພິມຈຳນວນທັງໝົດຂ້າງເທິງສຳເລັດພາຍໃນ 30 ວັນ.
4. ສາມາດຍື່ນເອກະສານຂ້າງເທິງໄດ້ ນັບຈາກວັນນີ້ຈົນເຖິງ ວັນພະຫັດ ວັນທີ 20/10/2022 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ E-mail: procurement@bcel.com.la



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

❖ <u>ເອກະສານຊອງທີ 2 (ປິດຊອງ)</u>:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນຄານ, ທີ **25/10/2021 ເວລາ 14:00** ໂມງ ສະນັ້ນ ບັນດາໂຮງພິມຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ບໍລິສັດຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 25/11/2022)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

❖ <u>ໝາຍເຫດ</u>:

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນທຄຕລ ຈະຄັດເລືອກເປັນແຕ່ລະລາຍການ.
3. ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດປະຕິທິນຕົວຈິງ 01 ຊຸດ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 07 ວັນ ພ້ອມກັນນັ້ນ ຜູ້ສະໜອງຈະໄດ້ ນຳໄປຜ່ານກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ຕ້ອງມີຄວາມສາມາດຈັດພິມຈຳນວນທັງໝົດສຳເລັດພາຍໃນ 30 ວັນນັບຈາກມື້ຮອງຮັບແບບ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ແທນ ຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ທລຕງ

ບັນທະລາດ ແກ້ວປະເສີດ

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດໍາເນີນທຸລະກິດ | ໄລຍະເວລາໃນການດໍາເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກໍານົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ........................

ຜູ້ອໍານວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

1




60 cm

40 cm


One
Bank
All You Can Bank On
ສະບາຍດີປີໃໝ່
Happy New Year
2023
BUY
SALE
21 cm
9 cm
15 cm